# Medi-Cal ມີການຄຸ້ມຄອງແຂ້ວໃຫ້



**ໃນຖານະເປັນສະມາຊິກ Medi-Cal, ຜົນປະໂຫຍດຂອງທ່ານ ແລະ ຜົນປະໂຫຍດຂອງລູກຂອງທ່ານລວມມີການຄຸ້ມຄອງແຂ້ວນຳ. ໃຫ້ເບິ່ງຕາຕະລາງຢູ່ລຸ່ມນີ້ສຳລັບສະພາບລວມຂອງການເບິ່ງແຍງດູແລແຂ້ວທີ່ໄດ້ຮັບການຄຸ້ມຄອງໂດຍ Medi-Cal.**

| ການບໍລິການ | ເດັກນ້ອຍ | ເດັກກາງ | ໄວລຸ້ນ | ການຖືພາ | ຜູ້ໃຫຍ່ | ຜູ້ອາວຸໂສ |
|---|---|---|---|---|---|---|
| ການກວດ* | ☀ | ☀ | ☀ | ☀ | ☀ | ☀ |
| ເອັກຊ໌ເຣ (X-rays) | ☀ | ☀ | ☀ | ☀ | ☀ | ☀ |
| ການອະນາໄມແຂ້ວ | ☀ | ☀ | ☀ | ☀ | ☀ | ☀ |
| ການເຄືອບຟລູອໍໄຣ | ☀ | ☀ | ☀ | ☀ | ☀ | ☀ |
| ການອັດແຂ້ວ | ☀ | ☀ | ☀ | ☀ | ☀ | ☀ |
| ການຖອນແຂ້ວ | ☀ | ☀ | ☀ | ☀ | ☀ | ☀ |
| ການບໍລິການສຸກເສີນ | ☀ | ☀ | ☀ | ☀ | ☀ | ☀ |
| ການລະງັບປະສາດ | ☀ | ☀ | ☀ | | ☀ | ☀ |
| ສານອັດແຂ້ວຄົກ** | | ☀ | ☀ | | | |
| ຮາກແຂ້ວ | | ☀ | ☀ | ☀ | ☀ | ☀ |
| ການຈັດແຂ້ວ (ການຮັດແຂ້ວ)*** | | | ☀ | | | |
| ຄອບແຂ້ວປອມ (Crowns) | | | ☀ | ☀ | ☀ | ☀ |
| ແຂ້ວປອມບາງສ່ວນ ຫຼື ຄົບຊຸດ | | | ☀ | ☀ | ☀ | ☀ |
| ການຈັດແຂ້ວປອມ | | | ☀ | ☀ | ☀ | ☀ |
| ການຂູດຫີນປູນ ແລະ ການວາງຮາກແຂ້ວ | | | ☀ | ☀ | ☀ | ☀ |

**ການກວດແຂ້ວຟຣີ ຫຼື ລາຄາຖືກທຸກໆຫົກເດືອນສຳລັບສະມາຊິກອາຍຸຕ່ຳກວ່າ 21 ປີ, ທຸກໆ 12 ເດືອນສຳລັບສະມາຊິກອາຍຸເກີນ 21 ປີ.*
***ສານອັດແຂ້ວຄົກໄດ້ຮັບການຄຸ້ມຄອງສຳລັບໄວລຸ່ນຈົນຮອດອາຍຸ 21 ປີ.*
****ສຳລັບບັນດາຜູ້ທີ່ຜ່ານເງື່ອນໄຂໄດ້ຮັບ.*

## ເດັກນ້ອຍ

ການໄປກວດແຂ້ວເທື່ອທຳອິດຂອງລູກຂອງທ່ານຄວນໄປຫຼັງຈາກແຂ້ວທຳອິດຂອງພວກເຂົາປະກົດອອກມາ, ແຕ່ບໍ່ຊ້າໄປກວ່າຄົບຮອບວັນເກີດທຳອິດຂອງພວກເຂົາ. ແຂ້ວເດັກນ້ອຍມີຄວາມສຳຄັນຫຼາຍຕໍ່ສຸຂະພາບ ແລະ ການພັດທະນາຂອງລູກຂອງທ່ານ. ພວກມັນຊ່ວຍລາວ ຫຼື ນາງຄ້ຽວອາຫານ, ປາກເວົ້າ ແລະ ຍິ້ມ.

## ເດັກກາງ

ເດັກນ້ອຍເລີ່ມຫຼົ່ນແຂ້ວນ້ຳນົມຂອງພວກເຂົາໄວແຕ່ອາຍຸຫ້າປີ. ອັນນີ້ແມ່ນເມື່ອແຂ້ວຖາວອນເລີ່ມຕົ້ນປົ່ງຂຶ້ນມາ. ໃຫ້ຖາມແພດແຂ້ວສຳລັບສານອັດແຂ້ວຄົກ ເພື່ອຊ່ວຍປົກປ້ອງແຂ້ວຄົກຂອງລູກຂອງທ່ານບໍ່ໃຫ້ເປັນຮູ.

## ໄວລຸ້ນ

ການກິນອາຫານ ແລະ ເຄື່ອງດື່ມທີ່ມີນ້ຳຕານຫຼາຍເຮັດໃຫ້ພວກເຂົາມີຄວາມສ່ຽງເປັນພະຍາດເຫືອກ ແລະ ແຂ້ວແມງຫຼາຍຂຶ້ນ, ເນື່ອງຈາກໄວລຸ່ນມັກຈະກິນ. ໄວລຸ່ນຜູ້ທີ່ສືບຕໍ່ໄປກວດແຂ້ວປົກກະຕິແມ່ນຮັບປະກັນໄດ້ເຖິງການມີສຸຂະພາບປາກທີ່ດີໄປຈົນເຖິງໄວເປັນຜູ້ໃຫຍ່.

## ການຖືພາ

ການເບິ່ງແຍງດູແລສຸຂະພາບປາກທີ່ດີຊ່ວຍປ້ອງກັນບັນຫາໃນລະຫວ່າງການຖືພາ. ໃນຖານະເປັນສະມາຊິກ Medi-Cal, ທ່ານໄດ້ຮັບການຄຸ້ມຄອງໃນລະຫວ່າງການຖືພາ ແລະ 60 ວັນຜ່ານໄປຈາກການເກີດລູກຂອງທ່ານ. ເວລາດີທີ່ສຸດທີ່ຈະໄປພົບແພດແຂ້ວແມ່ນພາກທີສອງຂອງທ່ານ (ການຖືພາໃນອາທິດ 13 ຫາ ອາທິດ 27).

## ຜູ້ໃຫຍ່

ນັບແຕ່ວັນທີ 1 ມັງກອນ 2018, ກົມປິ່ນປົວສຸຂະພາບ (DHCS) ໄດ້ເອົາຜົນປະໂຫຍດແຂ້ວຂອງຜູ້ໃຫຍ່ສຳລັບສະມາຊິກອາຍຸ 21 ປີຂຶ້ນໄປກັບມາໃຫ້ການຄຸ້ມຄອງແຂ້ວເຕັມຂອບເຂດ. ສຳລັບລາຍການໃຫ້ບໍລິການທີ່ໄດ້ຮັບການຄຸ້ມຄອງທັງໝົດ, ໃຫ້ເຂົ້າເບິ່ງ **SmileCalifornia.org**.

## ຜູ້ອາວຸໂສ

ໃນຖານະທີ່ເປັນຜູ້ໃຫຍ່ອາວຸໂສ, ທ່ານມີຄວາມສ່ຽງຕໍ່ການເປັນພະຍາດເຫືອກ ແລະ ບັນຫາສຸຂະພາບທາງປາກອື່ນໆ, ແຕ່ໂດຍການຖູແຂ້ວມື້ລະສອງເທື່ອ, ການຂັດແຂ້ວປະຈຳວັນ ແລະ ສິ່ງສຳຄັນທີ່ສຸດແມ່ນໄປພົບແພດແຂ້ວເປັນປົກກະຕິນັ້ນ, ທ່ານສາມາດຫຼຸດຄວາມສ່ຽງຂອງທ່ານລົງໄດ້

ຮຽນຮູ້ເພີ່ມຕື່ມກ່ຽວກັບຜົນປະໂຫຍດແຂ້ວຂອງທ່ານ ແລະ ຊອກຫາແພດແຂ້ວຂອງ Medi-Cal ຢູ່ໃກ້ທ່ານໄດ້ທີ່ **SmileCalifornia.org** ຫຼື ໂດຍການໂທຫາ **1-800-322-6384**. ດ້ວຍ Medi-Cal Dental, ການໄປຂອງທ່ານແມ່ນຟຣີ ຫຼື ລາຄາຖືກ. ກຳນົດເວລານັດໝາຍຂອງທ່ານມື້ນີ້!

**SmileCalifornia.org | 1-800-322-6384**

smile, CALIFORNIA™
MEDI-CAL HAS DENTAL COVERED